ສຳນັກງານ ຄຄຊ
ເລກທີ 0526
ວັນທີ 17 MAY 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 21 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 16 ພຶດສະພາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 30/04-04/05/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,02% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດຸນການຄ້າ ຂອງເດືອນ 03/2018 ຂາດດຸນຈຳນວນ 49,0 ຕື້ໂດລາສະຫະລັດ ຈາກຂາດດຸນ 57,7 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງ ຂອງອາທິດທີ 21/04/2018 ຫຼຸດລົງມີຈຳນວນ 1,76 ລ້ານຄົນ ຈາກ 1,83 ລ້ານຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ **23-27/04/2018** | ອາທິດນີ້ **30/04-04/05/2018** | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2081 | 1,1959 | 1,02% |
| ເຢນ/ໂດລາ | 109,29 | 109,10 | 0,17% |
| ບາດ/ໂດລາ | 31,58 | 31,77 | -0,60% |
| ເປໂຊ/ໂດລາ | 51,70 | 51,73 | -0,05% |
| ຣູເປີຍ/ໂດລາ | 13.885,00 | 13.935,00 | -0,36% |
| ໂດລາສິງກະໂປ/ໂດລາ | 1,3263 | 1,3341 | -0,58% |
| ຢວນ/ໂດລາ | 6,3363 | 6,3598 | -0,37% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 0,59% ຈາກ 67,88 ໂດລາ/ບາເຣວ ມາເປັນ 68,28 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນກາຊວນຂອງ ສະຫະລັດອາເມລິກາຫຼຸດລົງ 3,90 ລ້ານບາເຣວ ຂອງອາທິດທີ 27/04/2018;
- ລາຄາຄຳຫຼຸດລົງ 0,66% ຈາກ 1.317,71 ໂດລາ/ອອນ ມາເປັນ 1.309,01 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,33% ແລະ ອ່ອນຄ່າລົງ 0,04% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,57% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,58% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 27/04/2018 | | | ອາທິດນີ້ 04/05/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.321,44 | 8.345,01 | 8.333,01 | 8.347,84 | 8.371,79 | 8.360,75 | -0,32% | -0,32% | -0,33% | -0,55% | -0,54% | -0,57% |
| ບາດ | 264,66 | 265,84 | 265,54 | 264,97 | 266,11 | 265,65 | -0,12% | -0,10% | -0,04% | -3,75% | -3,52% | -3,58% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 4,44% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,05%;
- ປະລິມານເງິນ M2 ຫຼຸດລົງ 0,32% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,37%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (27/04-03/05/2018) ເຫັນວ່າ ທທກ ຂາຍໂດລາສຸດທິ 2,52 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 36,78 ລ້ານໂດລາ ແລະ ຂາຍໂດລາໄດ້ 39,30 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 554,16 ລ້ານບາດ (ໃນນີ້ຊື້ບາດໄດ້ 142,46 ລ້ານບາດ ແລະ ຂາຍບາດໄດ້ 696,62 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນໂດລາ ຫຼຸດລົງ 19,87% ແລະ ເງິນບາດ ຫຼຸດລົງ 22,90%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 8,70 ລ້ານໂດລາ ແລະ ເງິນບາດ ຈຳນວນ 43,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,46 ລ້ານໂດລາ ແລະ ເງິນບາດ ຈຳນວນ 109,10 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 20-26/04/2018 | | ອາທິດນີ້ 27/04-03/05/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **44,97** | **332,00** | **36,78** | **142,46** | **-18,21%** | **-57,09%** |
| - ທ/ຄທຸລະກິດລັດ | 14,98 | 82,65 | 10,25 | 44,22 | -31,58% | -46,50% |
| - ທ/ຄທຸລະກິດອື່ນໆ | 29,99 | 249,35 | 26,53 | 98,24 | -11,54% | -60,60% |
| **2. ການຂາຍເງິນຕາຕ່າງປະເທດ** | **49,98** | **756,26** | **39,30** | **696,62** | **-21,37%** | **-7,89%** |
| - ທ/ຄທຸລະກິດລັດ | 18,14 | 228,94 | 14,89 | 245,87 | -17,92% | 7,39% |
| - ທ/ຄທຸລະກິດອື່ນໆ | 31,84 | 527,32 | 24,41 | 450,32 | -23,34% | -14,52% |
| ຊື້-ຂາຍສຸດທິ ທທກ | **-5,01** | **-424,26** | **-2,52** | **-554,16** | **-49,70%** | **30,62%** |
| - ຜົດຕ່າງຊື້-ຂາຍ | -11,14% | -127,79% | -6,85% | -388,99% | -38,51% | 204,40% |
| - ມູນຄ່າການຊື້-ຂາຍ | **94,95** | **1.088,26** | **76,08** | **839,08** | **-19,87%** | **-22,90%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-4,55** | **0,00** | **-8,70** | **-43,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 4,55 | 0,00 | 8,70 | 43,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **13,89** | **271,65** | **3,46** | **109,10** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 04/2018 ຄາດວ່າຈະຢູ່ໃນລະດັບ 2,70% (ຕົວເລກຄາດຄະເນ).

2,5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ຫຼຸດລົງ 62,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 20,71 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 6,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 84,57 ລ້ານໂດລາສະຫະລັດທຽບເທົ່າ.

3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 604 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 36 ສະບັບ ເທົ່າກັບ 5,62% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 332,04 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 40 ຕື້ກີບ ເທົ່າກັບ 13,69%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (27/04-03/05/2018) ມີທັງໝົດ 3,549 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3,467 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈຳນວນ 766 ຕື້ກີບ ຈາກ 1.454,54 ຕື້ກີບ ມາເປັນ 688,37 ຕື້ກີບ ເທົ່າກັບ 52,67%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 82 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈຳນວນ 208,5 ຕື້ກີບ ຈາກ 215,24 ຕື້ກີບ ມາເປັນ 6,74 ຕື້ກີບ ເທົ່າກັບ 96,86%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 906,34 ຈຸດ ຫຼຸດລົງ ຈາກ 936,79 ຈຸດ ຫຼື ເທົ່າກັບ 1,70% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 273.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,39 ຕື້ກີບ ເພີ່ມຂຶ້ນ 141,61% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 59,39% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ LCC, EDL-Gen ແລະ BCEL ເປັນຕົ້ນ.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| BCEL | 92.000 | 489.060.000 | 5.300 | **249.100** | **1.291.490.000** | **5.250** | 170,76 | 164,08 | -50 | -0,94 |
| EDL-GEN | 19.400 | 88.980.000 | 4.600 | **23.200** | **103.960.000** | **4.400** | 19,59 | 16,84 | -200 | -4,35 |
| LWPC | - | - | 4.200 | - | - | **4.200** | - | - | - | - |
| PTL | 200 | 350.000 | 1.700 | - | - | **1.700** | -100,00 | -100,00 | - | 0 |
| SVN | - | - | 2.900 | - | - | **2.900** | - | - | - | 0 |
| PCD | - | - | 1.400 | **1.100** | **1.460.000** | **1.400** | - | - | - | 0 |
| LCC | 100 | 235.000 | 2.300 | **500** | **1.125.000** | **2.200** | 400,00 | 378,72 | -100 | -4,35 |
| ທັງໝົດ | 111.700 | 578.625.000 | | **273.900** | **1.398.035.000** | | 145,21 | 141,61 | | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມກົມການເມືອງ ທີ່ (ຫ້ອງວ່າການສູນກາງພັກ), ❷ ກອງປະຊຸມລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າທະນາຄານກາງອາຊຽນ+3, ❸ ກອງປະຊຸມຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ+3, ❹ ກອງປະຊຸມປະຈຳປີ 2018 ຂອງທະນາຄານພັດທະນາອາຊີ, ❺ ກອງປະຊຸມຄະນະຊີ້ນຳລວມໃນການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ຕລຊລ), ❻ ກອງປະຊຸມຮ່ວມກັບ ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ທີ່ (ທຫລ), ❼ ກອງປະຊຸມພົບປະລະຫວ່າງກົມຄຸ້ມຄອງທະນາຄານທຸລະກິດ ແລະ ບັນດາທະນຄານທຸລະກິດທົ່ວລະບົບ ກ່ຽວກັບວຽກງານຄຸ້ມຄອງ-ກວດກາ ປະຈຳປີ 2017 ແລະ ❽ ພິທີປາຖະກະຖາເລົ່າມູນເຊື້ອ ເນື່ອງໃນໂອກາດສະເຫຼີມສະຫຼອງວັນກຳມະກອນສາກົນ ວັນທີ 01 ພຶດສະພາ 2018 ຄົບຮອບ 132 ປີ ທີ່ (ສຫດ);
- ສຳເລັດຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຄະນະຜູ້ວ່າການ ທຫລ ຈາກອົງການຮ່ວມມືສາກົນຍີ່ປຸ່ນ (JICA).

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສ່ອງແສງລາຍງານສາຍພັກ-ສາຍລັດ ປະຈຳເດືອນ 03-04/2018 ທີ່ (ທຫລ), ❷ ກອງປະຊຸມວຽກງານຄຸ້ມຄອງທຸລະກິດໃຫ້ການບໍລິການໂອນເງິນ ທີ່ (ຕລຊລ), ❸ ກອງປະຊຸມຄະນະຮັບຜິດຊອບວຽກງານ ການພັດທະນາແບບຍືນຍົງ ຂອງຂະແໜງການທະນາຄານ ທີ່ (ທຫລ) ແລະ ❹ ກອງປະຊຸມສຳມະນາການເປີດເສລີທາງດ້ານການເງິນ-ການທະນາຄານ ພາຍໃຕ້ກອບຂອງອົງການການຄ້າໂລກ ທີ່ (ໂຮງແຮມລາວພລາຊາ).

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ